ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການດຳນາ

(ສະບັບທົດລອງ)



ຂຽນໂດຍ :ນາງ ບຸນເພັງ ເພັດດາ

ຂໍ້ມູນຈາກ : ບ້ານ ເມືອງພຽງ ເມືອງ ພຽງ ແຂວງ ໄຊຍະບູລີ

ປີ 2007

PDF created with pdfFactory Pro trial version www.pdffactory.com

PDF created with pdfFactory Pro trial version www.pdffactory.com

## ຮູບແລະປະຫວັດຂອງຜູ້ຂຽນ



ຊື່: ນາງ ບຸນເພັງ

ນາມສະກຸນ: ເພັດດາ

ອາຍຸ: 36 ປີ

ອາຊີບ: ພະນັກງານ

## ເຫດຜົນທີ່ຂຽນຫົວຂໍ້ນີ້

ເພື່ອຢາກໃຫ້ເດັກນ້ອຍໄດ້ເຫັນເຖິງຄຸນຄ່າຂອງເຂົ້າແຕ່ລະເມັດເພື່ອຈະໄດ້ມາມັນແສນລຳບາກ ແລະ ສືບຕໍ່ຮັກສາມູນເຊື້ອອັນດີງາມຂອງຄົນແຕ່ເກົ່າໄວ້ເພື່ອບໍ່ໃຫ້ມັນສູນຫາຍ

# ປຶ້ມຄວາມຮູ້ພູມປັນຍາທ້ອງຖິ່ນ

# "ການດຳນາ"

ຮຽບໂຮມ ແລະຈັດໜ້າໂດຍ: ນາງ ແສງແກ້ວ ໄພ່ທຸ່ມພອນ

ແຕ້ມໂດຍ: ທ. ຄຳຫຼ້າ ພອນມະນີວົງ

ຜູ້ຮຽບຮຽງ: ອ.ຈ ໂພໄຊ ຈັນທະວົງສາ

ເຈົ້າຂອງ: ພະແນກສຶກສາ ໄຊຍະບູລີ ແລະ ສູນອົບຮົມຮວມພັດທະນາ

PDF created with pdfFactory Pro trial version www.pdffactory.com

## ຄຳນຳ

ປື້ມພູມປັນຍາທ້ອງຖິ່ນເຫລັ້ມນີ້ໄດ້ມາຈາກການຂຽນຂອງຄູຝຶກຊຸມຊົນ. ເຊິ່ງໄດ້ຮັບການຮຽບຮຽງເບື້ອງຕົ້ນຈາກອຳນວຍການສູນອົບຮົມຮ່ວມພັດທະນາ.

ປື້ມເຫລັ້ມນ້ອຍໆນີ້ໄດ້ບັນຈຸເອົາເນື້ອໃນທີ່ເວົ້າເຖິງຫົວຂໍ້ໃດໜຶ່ງໂດຍມີຫລາຍໆກິດຈະກຳທີ່ເປັນການທົດລອງເອົາຄວາມຮູ້ທ້ອງຖິ່ນເຂົ້ານຳພາ ແລະສິດສອນນັກຮຽນຊັ້ນປະຖົມໂດຍເອົາບົດທີ່ງ່າຍມາສອນຫ້ອງປໍ1, ປໍ2 ແລະບົດທີ່ຍາກກໍສອນຫ້ອງທີ່ໃຫຍ່ຂຶ້ນໄປ.

ຄະນະຈັດທຳຄິດວ່າຍັງມີຫລາຍບັນຫາທີ່ຍັງບໍ່ທັນພຽງພໍ ແລະຂາດໄປຫວັງວ່າຄົງຈະໄດ້ຮັບຄຳຕຳນິຕິຊົມຈາກທຸກໆທ່ານ ພວກເຮົາພ້ອມທີ່ຈະປັບປຸງນຕາມຄວາມເໝາະສົມ.

ຄະນະຈັດທຳ

## <u>ບົດເລກ</u>

ໃນປີໜຶ່ງ ລຸງສັງຄີ ຜະລິດເຂົ້ານາໄດ້ 750 ກິໂລກຼາມ,ຖ້າລາວຂາຍ 600 ກິໂລກຼາມ ເຂົ້າຂອງລາວຈະຍັງເຫຼືອຈັກກິໂລກຼາມ ?

<u>ຄຳຕອບ</u>

750 – 600 = 150 ກິໂລກຼາມ

## <u>ນິທານ</u>

ແຕ່ກີ້ແຕ່ກ່ອນເມັດເຂົ້າເຮົາກິນທຸກວັນນີ້ເມັດຊ່ຳກັບໝ່ວຍໝາກພ້າວ ແລະກໍບໍ່ໄດ້ປູກຄືທຸກວັນນີ້ເຂົ້າຈະບິນມາໃສ່ເລົ້າເຮົາເອງ. ຍັງມີແມ່ໝ້າຍຜູ້ໜຶ່ງບໍ່ມີຜົວເຮັດເລົ້າເຂົ້າໃຫ້ເຂົ້າທີ່ບິນມາຕົກໃສ່ຫລາຍໂພດເລີຍບໍ່ມີບ່ອນໃສ່ລາວໄດ້ເອົາໄມ້ຄານຕີເມັດເຂົ້າພ້ອມທັງປ້ອຍວ່າ:ຢ່າມາຫາກູ,ກູເບື່ອແລ້ວ,ບິນມາຫລາຍໂພດ,ເມັດເຂົ້າກໍໃຫຍ່,ກູເບືອແລ້ວທັງປອ້ຍທັງຕີເມັດເຂົ້າ.ເມັດເຂົ້າເລີຍແຕກຊະແຕກຊາຍອອກຈາກກັນກາຍເປັນເມັດເຂົ້ານ້ອຍຈົນມາຮອດປັດຈຸບັນນີ້

PDF created with pdfFactory Pro trial version www.pdffactory.com

## ຂັບທຸ້ມ: ຂໍດຳນານຳນ້ອງ

ໜ່ອຍ ນິ ໜ່ອຍນິ ໜ່ອຍ ໜ່ອຍ ນິ ໜ່ອຍ

| | |
|---|---|
| ໂອຍແກ້ມອ່ຳທ່ຳ | ຂໍດຳນານຳນ້ອງໄດ້ບໍ່ |
| ໄດ້ແທ້ໄດ້ວ່າ | ຂໍດຳນາພຽງຊົ່ວຄາວຊິໄດ້ບໍ່ນ້ອງ |
| ອ້າຍນີ້ໜາ | ຕາດຳເອີຍອ້າຍເປັນຄົນຂີ້ລ້າຍ |
| | ( ບໍ່ລາຍບໍ່ລາຍ) |
| ຄົນຂີ້ລ້າຍ | ຕາຊ້າຍນ້ອງບໍ່ຫຼຽວ (ຫຼຽວແທ້ຫຼຽວວ່າ ) |
| ມາຍາກ | ມາລຳບາກໃຈອ້າຍແທ້ເດ |
| ໂອຍນໍ | ຍາກມາລຳບາກໃຈອ້າຍແທ້ເດ |
| ເສຍໃຈຕາຍ | ບໍ່ໄດ້ນາງມານອນສ້ອນ...ຈາຕິໂຍນເຕັງ |
| ເຈົ້າດ່ອກດ່ອກເອີຍ | ເຈົ້າດ່ອກດ່ອກເອີຍ |
| ເອີເອີຍ ເອີເອີຍ ເອີ່ງເອີຍ | ໂອລະວ່າເຈົ້າດອກຈຳປາ |
| ນ້ອງເຮັດນານັ້ນມາແຕ່ນານ | ມາແຕ່ບູຮານແຕ່ເດີມດາເຄົ້າ |
| | ຈາຕິໂຍນເຕັງ |
| ເອີເອີຍ ເຈົ້າແກມ ເຈົ້າແກມ | ມານີ້ອ່ອນອ່ອນ |
| ຄັນວ່າອ່ອນສິໄຄ | ຢ່າໄດ້ໄລກໍລືມອ້າຍ |

## ຄວາມເປັນມາ

ເຂົ້າແມ່ນພືດຕົ້ນຕໍ່ທີ່ສຳຄັນສຳລັບລ້ຽງຊີວິດການເປັນຢູ່ຂອງຄົນເຮົາເພາະວ່າເຂົ້າເປັນອາຫານຫຼັກແລະໃຫ້ທາດວິຕາມິນສູງເພື່ອຫຼໍ່ລ້ຽງຊີວິດຂອງຄົນເຮົາໃຫ້ຢືນຍົງຄົງຕົວໄດ້ເທົ່າທຸກວັນນີ້

PDF created with pdfFactory Pro trial version www.pdffactory.com

## <u>ອຸປະກອນ</u>

1. ແນວປູກ ( ຕົ້ນກ້າ )



2. ກະຊ້າໃສ່ກ້າ



## ເຊີ້ງ: ການປູກເຂົ້າ

ໂຮ່.....ຮິວ.... ໂຮ່.....ຮິວ... ໂຮ່....ຮິວ

ມາພວກເຮົາມາ ພ້ອມກັນປູກເຂົ້າ
ທັງຂ້ອຍແລະເຈົ້າ ນ້ອຍໝຸ່ມບ່າວສາວ
ເປັນຮີດຄອງລາວ ມີມາແຕ່ກີ້
ຮອດຍາມເດືອນສີ່ ຈີ່ເຂົ້າໃສ່ບາດ
ເຮົາບໍ່ໄດ້ຂາດ ເພິ່ນເຮັດທຸກປີ
ເຮົາສາມັກຄີ ສືບຕໍ່ພາຍໜ້າ

## ເພງ: ນາເຂົ້າ

ເມືອງພຽງແຫ່ງນີ້ ສົມຄຳເຂົາຊ່າ
ເປັນແດນອູ່ເຂົ້າອູ່ປາ ພືດພັນນາໆໜ້າອອນຊອນໃຈ
ມີຝ່າຍນ້ຳໄຫຼ ລະບາຍເຂົ້າທົ່ງນາໃຫຍ່
ພໍ່ແມ່ປະຊາຊົນໄດ້ ເຮັດນາທັງສອງລະດູ

PDF created with pdfFactory Pro trial version www.pdffactory.com

## ຫຼັກການທີ່ສຳຄັນ

ບໍ່ຄວນຫວ່ານກ້າຖີ່ເກີນໄປ  ເພາະຈະເຮັດໃຫ້ຕົ້ນກ້າບໍ່ແຂງແຮງ

## ຄຸນປະໂຫຍດ

- ເຂົ້າມີທາດວິຕາມິນສູງ
- ສາມາດປຸງແຕ່ງເປັນເຂົ້າໜົມຫລາຍຊະນິດໄດ້
- ຖ້າໄດ້ເຂົ້າຫຼາຍສາມາດຂາຍເພື່ອສ້າງລາຍໄດ້ໃຫ້ຄອບຄົວ

### ກາບ:  ເຂົ້າເມືອງພຽງ

| | |
|---|---|
| ຂ້ອຍຈະເວົ້າ | ເລື່ອງເຂົ້າຮວງງາມ |
| ກ່ອງຮວງຕາມ | ທ້ອງຖິ່ນດິນນາ |
| ປວງປະຊາ | ພາກັນເກັບກ່ຽວ |
| ເປັນໃຈດຽວ | ກ່ຽວເຂົ້າໄດ້ຫລາຍ |
| ເອົາໄປຂາຍ | ກາຍເປັນສິນຄ້າ |
| ຈົນລືຊ່າ | ວ່າເຂົ້າເມືອງພຽງ |
| ມີຊື່ສຽງ | ທົ່ວອານາເຂດ |
| ສຸດວິເສດ | ອູ່ເຂົ້າອູ່ປາ |

## ວິທີປູກ

ການປູກແມ່ນຂຶ້ນກັບຄວາມຖະນັດຂອງຜູ້ຈະປູກວ່າຈະໃຊ້ມືຊ້າຍ  ຫຼື ຂວາກໍໄດ້,ແຕ່ຖ້າເຮົາເອົາມືເບື້ອງຊ້າຍໂຈມມັດກ້າເບື້ອງຂວາຈັບກົບກ້າ  4  -  5  ເສັ້ນປູກລົງໃສ່ນາ.



PDF created with pdfFactory Pro trial version www.pdffactory.com

ການຈັບກ້າແມ່ນເອົາຫົວນິ້ວໂປ້ມືຈັບກົບກ້າແປະໃສ່ນິ້ວຊີ້ແລ້ວກໍປັກດຳເລີຍ,ໄລຍະຫາງລະຫວ່າງແຖວໜຶ່ງໃຫ້ໄດ້ ປະມານ 30 – 40 ຊັງຕີແມັດ,ການປູກ ( ການດຳ ) ແມ່ນບໍ່ເລິກເກີນ 3 – 4 ຊັງຕີແມັດ ຖ້າດຳເລິກເກີນໄປຈະເຮັດໃຫ້ຕົ້ນກ້າຂະຫຍາຍຕົວຊ້າ ແຕ່ຖ້າປູກ ( ດຳ ) ຕື້ນໂພດຈະເຮັດໃຫ້ຕົ້ນກ້າລົ້ມການປູກ ( ການດຳ ) ຕົ້ນກ້າຕ້ອງໃຫ້ຢູ່ລັກສະນະຕັ້ງຊື່ເພາະຈະເຮັດໃຫ້ຕົ້ນກ້າປົ່ງຮາກໄວ ແລະຂະຫຍາຍຕົວໄວ. ສ່ວນລະດັບນ້ຳນາເວລາປູກ ( ດຳ ) ໃໝ່ນັ້ນບໍ່ໃຫ້ນ້ຳນາຫຼາຍເກີນໄປ ແລະບໍ່ໃຫ້ໜ້ອຍເກີນໄປຄວາມເລິກປະມານ 5 – 10 ຊັງຕີແມັດ

**<u>ຫົວຂໍ້ທີ່ຕ້ອງເພີ່ມຕື່ມໃສ່ໃນປຶ້ມຫົວນີ້:</u>**

1. ການກະກຽມເຂົ້າມາຫວ່ານເປັນກ້າມີຂັ້ນຕອນແນວໃດ?

2.ການບົວລະບັດຮັກສາກ້າແລະຈັກມື້ຈຶ່ງສາມາດເອົາກ້າມາດຳໄດ້?

3.ວິທີດຳການກະກຽມດິນຕ່າງໆລະອຽດ

4. ການບົວລະບັດຮັກສາເຂົ້າພາຍຫຼັງດຳ

PDF created with pdfFactory Pro trial version www.pdffactory.com